**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ເລກທີ 108/ຖວ

# ຄຳສັ່ງແນະນຳຂອງລັດຖະມົນຕີວ່າການ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ໃນການຈັດຕັ້ງປະຕິບັດ ດຳລັດຂອງນາຍົກລັດຖະມົນຕີ ກ່ຽວກັບການມອບ ນາມມະຍົດສິລະປິນລາວ

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍມາດຕະຖານນາມມະຍົດສິລະປິນ ເລກທີ 194 /ນຍ ລົງວັນທີ..17/12/2004.

- ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໃຫ້ໄດ້ຮັບໝາກຜົນອັນດີງາມ, ຮັບປະກັນໃຫ້ໄດ້ລັກສະນະຕົວຈິງ ແລະ ຖືກຕ້ອງ ຕາມຜົນງານ ແລະ ຄຸນງາມຄວາມດີ ທີ່ຜູ້ກ່ຽວໄດ້ສ້າງສົມໃນຜ່ານມາ ແລະ ຮັບປະກັນໄດ້ຄວາມສາມັກຄີເອກະພາບພາຍໃນໝູ່ເຫຼົ່າສິລປິນໃຫ້ໜັກແໜ້ນ ແລະ ເລີກເຊີງປະກອບສ່ວນຢ່າງສົມກຽດ ເຂົ້າໃນການອະນຸລັກ ແລະ ພັດທະນາສິລະປະວັດທະນະທຳຂອງຊາດ ໃຫ້ຈະເລີນກ້າວໜ້າຢ່າງບໍ່ຢຸດຢັ້ງ.

## ລັດຖະມົນຕີຕົກລົງ:

1)- ມອບໃຫ້ຫ້ອງການກະຊວງ ເຊີນນັກສິລະປິນຈາກທຸກພາກສ່ວນ ເພື່ອຟັງການລຸລວງ ເຜີຍແຜ່ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍນາມມະຍົດສິລະປິນລາວ.

- ຟັງການໂອ້ລົມເຖິງຄວາມໝາຍ ຄວາມສຳຄັນ ຂອງ ການມອບນາມມະຍົດດັ່ງກ່າວຈາກ ຂັ້ນເທິງ
- ຖາມ-ຕອບບັນຫາຕ່າງໆ ທີ່ມີຄວາມສົນໃຈ;

2)- ມອບໃຫ້ກົມຈັດຕັ້ງ-ພະນັກງານ ຮ່າງຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ກ່ຽວກັບການແຕ່ງຕັ້ງຄະນະກຳມະການຂັ້ນກະຊວງເພື່ອ ຮັບຜິດຊອບ ໃນການເລືອກເຟັ້ນສິລະປິນຜູ້ທີ່ຈະໄດ້ຮັບມອບນາມມະຍົດ;

3)- ມອບໃຫ້ກົມສິລະປະກຳ ປະສານສົມທົບກັບພະແນກຖະແຫລງຂ່າວ ແລະ ວັດທະນະທຳຂອງແຂວງ, ເຂດພິເສດ ແລະ ນະຄອນຫຼວງ ພ້ອມດ້ວຍກອງສະແດງສິລະປະອາຊີບ ສະຖາບັນກົມກອງອ້ອມຂ້າງສູນກາງ ແລະ ໂຮງຮຽນສິລະປະດົນຕີ ໃນການເລືອກເຟັ້ນ ແລະ ນຳສະເໜີຜູ້ທີ່ຈະໄດ້ຮັບນາມມະຍົດສິລະປິນ ຂະແໜງສິລະປະການສະແດງ ຕໍ່ຄະນະກຳມະການຂັ້ນກະຊວງ;

4)- ມອບໃຫ້ສາມະຄົມວິຈິດສິນ ປະສານສົມທົບກັບພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ຂອງແຂວງ-ນະຄອນຫຼວງ ກໍຄືສະຖາບັນ ແລະ ກົມກອງອ້ອມຂ້າງສູນກາງ ພ້ອມດ້ວຍ ໂຮງຮຽນວິຈິດສິນຊັ້ນກາງ, ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ ໃນການເລືອກເຟັ້ນ ແລະ ນຳສະເໜີ ຜູ້ທີ່ຈະໄດ້ຮັບການນາມມະຍົດສິລະປິນ ຂະແໜງວິຈິດຕະກຳ-ປະຕິມະກຳ-ສະຖາປະຕິມະກຳ ສິລະປະຫັດຖະກຳ ເພື່ອນຳສະເໜີຄະນະກຳມະການຂັ້ນກະຊວງ;

5)- ມອບໃຫ້ສະມາຄົມນັກປະພັນລາວປະສານສົມທົບ ກັບ ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ເຂດພິເສດ ແລະ ນະຄອນຫຼວງ ພ້ອມດ້ວຍສະຖາບັນກົມກອງອ້ອມຂ້າງ ສູນກາງໃນການເລືອເຟັ້ນ ແລະ ນຳສະເໜີບຸກຄົນທີ່ຈະໄດ້ຮັບນາມມະຍົດສິລະປິນ ຂະແໜງ ວັນນະກຳໂດຍສະເພາະນັກປະພັນ - ນັກກາວີ ຕໍ່ຄະນະກຳມະການຂັ້ນກະຊວງ;

6)- ມອບໃຫ້ກົມແຜນການ-ການເງິນ ຂື້ນແຜນງົບປະມານເງິນບຳເນັດຈຳນວນໜຶ່ງ ພ້ອມດ້ວຍການ ເຮັດກາໝາຍ, ບັດຮັບຮອງນາມມະຍົດສິລະປິນ ເຂົ້າໃນແຜນງົບປະມານ ສົກປີ 2005 – 2006;

7)- ພາຍຫຼັງການສຶກສາອົບຮົມແນວຄິດການເມືອງ ແລະ ລຸລວງເຜີຍແຜ່ເນື້ອໃນຈິດໃຈ ມາດຕະຖານ ນາມມະຍົດສິລະປິນແລ້ວ, ແຕ່ລະຂະແໜງການ ທີ່ໄດ້ກ່າວມາຂ້າງເທິງ ໃຫ້ເລີ້ມ ຕົ້ນການປະຊຸມຄົ້ນຄວ້າ ກວດກາ ແລະ ເລືອກເຟັ້ນຜູ້ທີ່ຈະໄດ້ຮັບນາມມະຍົດສິລະປິນ ຕາມ ຫຼັກການລວມສູນປະຊາທິປະໄຕ ສຽງສ່ວນໜ້ອຍຂື້ນກັບສຽງສ່ວນຫຼາຍ ຮັບປະກັນຄວາມ ຖືກຕ້ອງຊັດເຈນຕາມຜົນງານ ແລະ ຄຸນງາມຄວາມດີ ຊຶ່ງສັງຄົມທັງພາຍໃນ ແລະ ຕ່າງປະ ເທດ ໄດ້ຮັບຮູ້ຜົນງານ ແລະ ຊື່ສຽງ ໂດຍເປົ້າໝາຍ ແລະ ບຸລິມະສິດໃນຊຸດທຳອິດນີ້ ໃຫ້ເລັ່ງ ໃສ່ສິລະປິນ ທ່ານອາວຸໂສ ຊຶ່ງນັບທັງຜູ້ເສຍຊີວິດ ຫຼື ອອກບຳເນັດບຳນານໄປແລ້ວ ດ້ວຍວິທີ ຄັດເລືອກແບບປິດລັບ ຫຼື ເປີດເຜີຍກໍ່ໄດ້.

**ໝາຍເຫດ**: ສິລະປິນທີ່ໄດ້ຮັບການຄັດເລືອກທຸກຄົນ ຕ້ອງມີຜົນງານບົດປະພັນຜະລິດຕະ ພັນ ຊຶ່ງເປັນຂອງຕົນເອງຕິດແນບ ເພື່ອເປັນຫຼັກຖານຢັ້ງຢືນມາພ້ອມເພື່ອສົ່ງໃຫ້ ຄະນະກຳມະ ການລະດັບກະຊວງຄົ້ນຄວ້າ ເລືອກເຟັ້ນ ຢ່າງຊ້າບໍ່ໃຫ້ກາຍ ເດືອນ 9/2005.

- ຈາກນັ້ນຄະນະກຳມະການຂັ້ນກະຊວງສືບຕໍ່ຄັດເລືອກ ແລະ ນຳສະເໜີຂັ້ນເທິງ.
- ຄາດໝາຍ: ເນື່ອງໃນໂອກາດວັນຊາດ 2 ທັນວາ ຄົບຮອບ 30 ປີ ໃຫ້ໄດ້ປະກາດ ຜູ້ໄດ້ຮັບ ນາມມະຍົດດັ່ງກ່າວເປັນຊຸດທຳອິດ.

8)- ມອບໃຫ້ທຸກອົງການຈັດຕັ້ງ ແລະບັນດາທ່ານ ທີ່ມີສ່ວນກ່ຽວຂ້ອງໄດ້ຮັບຮູ້ ແລະ ຈັດຕັ້ງ ປະຕິບັດ ຢ່າງເຂັ້ມງວດ;

9)-ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບມື້ລົງລາຍເຊັນ ເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ,ວັນທີ 18/2/2005

ລັດຖະມົນຕີວ່າການ

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ

**ພັນດວງຈິດ**

(ເຊັນ ແລະ ຈ້ຳກາແລ້ວ)